

ພິທີປະດັບຫຼຽນນາມມະຍົດ ພັດທະນາດີ ເດັ່ນແຫ່ງຊາດໃຫ້ແກ່ : ທ່ານ ຈັນທອນ ສິດທິໄຊ ປະທານສະພາ ບໍລິຫານ ບໍລິສັດປິໂຕຣລ້ຽມ ເທຣດດິ້ງລາວ ມະຫາຊົນ ໄດ້ຈັດຂຶ້ນໃນວັນທີ 29 ທັນວາ 2020 ທີ່ໂຮງແຮມ ແລ່ນມາ ນະຄອນຫຼວງວຽງຈັນ ໃຫ້ກຽດເຂົ້າຮ່ວມໃນພິທີ ມີ ທ່ານ ນາງ ເຂັມມະນີ ພົນເສນາ ລັດຖະມົນຕີກະຊວງອຸດສາຫະກຳ ການຄ້າ, ທ່ານ ດຣ ຄຳມະນີ ອິນທິລາດ ລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່; ທ່ານ ສຈ.ດຣ ອ່ອດ ພົງສະຫວັນ ຜູ້ກໍ່ຕັ້ງ ກຸ່ມບໍລິສັດ ພົງສະຫວັນ ກຳມະການສູນກາງແນວລາວສ້າງຊາດ ຮອງຫົວໜ້າຄະນະທີ່ປຶກສາ ແລະ ຜູ້ຮ່ວມມື ວຽກງານເສດຖະກິດ ແລະ ກົດໝາຍຂອງແນວລາວສ້າງຊາດ, ທ່ານ ຈັນທອນ ສິດທິໄຊ ປະທານ ບໍລິສັດປິໂຕຣລ້ຽມ ເທດດິ້ງລາວມະຫາຊົນ ພ້ອມດ້ວຍບັນດາການນຳພັກ-ລັດ, ທ່ານທູດ, ທຸຕານຸທູດ, ນັກທຸລະກິດ, ແຂກທີ່ຖືກເຊີນ ທັງ ພາຍໃນ ແລະ ຕ່າງປະເທດ ເຂົ້າຮ່ວມ.





ໃນພິທີ ທ່ານ ຄຳຜາຍ ຈັນສີສະໜຸດ ຮອງປະທານກຸ່ມບໍລິສັດພົງສະຫວັນ ຈຳກັດ ໄດ້ຂຶ້ນກ່າວ ສະຫລຸບຜົນງານ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ທ່ານ ຈັນທອນ ສິດທິໄຊ ປະທານສະພາບໍລິຫານ ບໍລິສັດ ປິໂຕຣລ້ຽມ ເທຣດດິ້ງລາວ ມະຫາຊົນ ຜ່ານໄລຍະ 10 ປີ ໂດຍພາຍໃຕ້ການນຳພາຂອງພັກ ປະຊາຊົນປະຕິວັດລາວ ແລະ ການຊີ້ນຳໂດຍກົງ ຈາກລັດຖະບານ, ບັນດາອົງການຈັດຕັ້ງທີ່ກ່ຽວຂ້ອງ ຂອງສູນກາງ ແລະ ທ້ອງຖິ່ນ, ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ໄດ້ມີການເຄື່ອນໄຫວດຳເນີນທຸລະກິດຂອງຕົນຢ່າງຕໍ່ເນື່ອງ ແລະ ກໍ່ສາມາດຍາດໄດ້ຜົນສຳເລັດທີ່ພົ້ນເດັ່ນໃນ ຫລາຍດ້ານ ອັນເປັນການປະກອບສ່ວນຢ່າງໃຫ່ຍຫລວງ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດໄດ້ສະໜອງນ້ຳມັນເຊື້ອໄຟໃຫ້ປະຊາຊົນ ແລະ ຜູ້ຊົມໃຊ້ໃນແຕ່ລະປີ ຫລາຍກວ່າ 143 ລ້ານລິດ, ຜ່ານສະຖານີບໍລິການ 118 ແຫ່ງ, ມີ 5 ສາຂາ ໃນທົ່ວປະເທດ, ມີຄັງສຳຮອງນ້ຳມັນ 5 ແຫ່ງ, ບັນຈຸນ້ຳມັນໄດ້ 5.5 ລ້ານລິດ. ເປັນບໍລິສັດ ທຳອິດ ຂອງລາວທີ່ໄດ້ຮັບຮອງຄຸນນະພາບການບໍລິການ ທີ່ດີເດັ່ນ ແລະ ໄດ້ມາດຖານສາກົນ. ປະຈຸບັນມີ ລົດຂົນສົ່ງ ບໍລິການນ້ຳມັນ 300 ຄັນ, ມີບໍລິສັດຂວັນໃຈການຄ້າ ຂາເຂົ້າ-ຂາອອກ ຈຳກັດ ໄດ້ນຳເອົາສິນຄ້າຊົມໃຊ້ໃນຊີວິດປະຈຳ ວັນ ປະເພດເຄື່ອງບໍລິໂພກ ທີ່ຫລາກຫລາຍ ເພື່ອສະໜອງຄວາມຕ້ອງການຂອງຕະຫລາດໄດ້ຫລາຍກວ່າ 20,000 ກ່ວາ ຮ້ານ ໃນທົ່ວປະເທດ.





ບໍລິສັດ ປິໂຕຣລ້ຽມ ເທຣດດິ້ງລາວ ມະຫາຊົນ ຍັງໄດ້ເຊັນ MOU ກັບລັດຖະບານ ແລະ ທ່ອງຖິ່ນຕ່າງໆ ທັງ ພາຍໃນ ແລະ ຕ່າງປະເທດ ນອກນັ້ນ ຍັງໄດ້ເອົາໃຈໃສ່ ປະຕິບັດລະບຽບກົດໝາຍ ຂອງລັດວາງອອກ ປະກອບສ່ວນຢ່າງ ຕັ້ງໜ້າ ເຂົ້າໃນການເສຍພາສີອາກອນໃຫ້ລັດ ໄດ້ຕາມຄາດໝາຍ, ໄປພ້ອມກັນນີ້ ຍັງໄດ້ບໍລິຈາກຊ່ວຍເຫລືອສັງຄົມ ເປັນຕົ້ນ ບໍລິຈາກຊ່ວຍເຫລືອຕ້ານໄພນ້ຳຖ້ວມ, ແຫ້ງແລ້ງ, ວຽກງານການສຶກສາ, ກິລາ, ອື່ນໆ ແລະ ໃນຊຸມປີຕໍ່ໜ້ານີ້ ຈະຕ້ອງສຸມໃສ່ສູ້ຊົນເຮັດໃຫ້ ທຸລະກິດມີຄວາມ ເຂັ້ມແຂງ ສາມາດ ແຂ່ງຂັນ ໄດ້ກັບພາກພື້ນ ແລະ ສາກົນແນໃສ່ ປະກອບສ່ວນເຂົ້າໃນ ການແກ້ໄຂຄວາມທຸກຍາກຂອງປະຊາຊົນບັນດາເຜົ່າໃຫ້ນັບມື້ນັບຫຼຸດລົງເທື່ອລະກ້າວ.





ໃນພິທີ ທ່ານ ນາງ ຈັນສຸກ ແສງພະຈັນ ຫົວໜ້າກົມຈັດຕັ້ງ ແລະ ພະນັກງານ ກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ຂຶ້ນອ່ານ ລັດຖະດຳລັດຂອງປະທານປະເທດ ວ່າດ້ວຍການປະດັບຫຼຽນ ພັດທະນາດີເດັ່ນແຫ່ງຊາດ ໃຫ້ແກ່ ທ່ານ ຈັນທອນ ສິດທິໄຊ ປະທານສະພາບໍລິຫານ ບໍລິສັດ ປິໂຕຣລ້ຽມ ເທຣດດິ້ງລາວ ມະຫາຊົນ ທີ່ມີຜົນງານດີເດັ່ນ ປະກອບສ່ວນພັດທະນາເສດຖະກິດ - ການຄ້າ ໃນໄລຍະຜ່ານມາ ໃຫ້ກຽດຂຶ້ນປະດັບຫຼຽນພັດທະນາ ດີ ເດັ່ນແຫ່ງ ຊາດ ຄັ້ງນີ້ ໂດຍ ທ່ານ ນາງ ເຂັມມະນີ ພົນເສນາ ລັດຖະມົນຕີ ກະຊວງອຸສາຫະກຳ ແລະ ການຄ້ານ ພ້ອມດຽວກັນນີ້ ທ່ານຍັງໄດ້ ຂຶ້ນກ່າວໂອ້ລົມ ເພື່ອເປັນການຊີ້ທິດເຍືອງທາງ ໃຫ້ແກ່ການເຄື່ອນໄຫວ ຈັດຕັ້ງປະຕິບັດ ແລະ ພັດທະນາ ວຽກງານຂອງ ບໍລິສັດ ປິໂຕຣລ້ຽມ ເທຣດດິ້ງລາວ ມະຫາຊົນ ໃນອານາຄົດ ອີກດ້ວຍ.





ໃນໂອກາດອັນມີຄວາມໝາຍສຳຄັນນີ້ ທ່ານ ຈັນທອນ ສິດທິໄຊ ປະທານສະພາບໍລິຫານ ບໍລິສັດ ປີໂຕຣລ້ຽມ ເທຣດດິ້ງລາວ ມະຫາຊົນ ກໍ່ໄດ້ຂຶ້ນກ່າວຮັບ ຄຳໂອ້ອາດ ຂອງທ່ານລັດຖະມົນຕີ ກະຊວງອຸສາຫະກຳ ແລະ ການຄ້າ ພ້ອມທັງໃຫ້ຄຳໝັ້ນສັນຍາວ່າ: ຈະສຸມໃສ່ຍົກສູງປະສິດທິຜົນທາງດ້ານປະລິມານ ແລະ ຄຸນນະພາບ, ບັນດາຫົວໜ່ວຍທຸລະກິດທີ່ມີແລ້ວ, ເອົາໃຈໃສ່ຢ່າງບໍ່ລົດລະຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງບັນດາໂຄງການທີ່ໄດ້ເຊັນສັນຍາຮ່ວມກັບລັດ, ບັນດາຂະແໜງການ, ທ້ອງຖິ່ນ ແລະ ກັບຕ່າງປະເທດ ເພື່ອເຮັດໃຫ້ທຸລະກິດ ມີການຂະຫຍາຍຕົວນັບມື້ນັບກ້າວຂຶ້ນຢ່າງບໍ່ຢຸດຢັ້ງ ນຳເອົາຜົນປະໂຫຍດມາໃຫ້ປະເທດຊາດ, ປະຊາຊົນ ແລະ ບໍລິສັດ, ປະຕິບັດຢ່າງຖືກຕ້ອງລະບຽບການ ແລະ ກົດໝາຍຂອງລັດ, ເພີ່ມທະວີສ້າງບຸກຄະລະກອນ ທີ່ມີຄວາມສາມາດ ນຳເອົາເຕັກນິກ, ເຕັກໂນໂລຍີ ທີ່ທັນສະໄໝເຂົ້າມານຳໃຊ້ ໃນທຸກຂົງເຂດວຽກງານ, ສືບຕໍ່ ເຂົ້າຮ່ວມໂຄງການສາມສ້າງ ປະກອບສ່ວນ ເຂົ້າໃນການລົບລ້າງຄວາມທຸກຍາກຂອງປະຊາຊົນ ໃຫ້ນັບມື້ນັບຫຼຸດລົງເທື່ອລະກ້າວ, ປະຕິບັດຢ່າງຖືກຕ້ອງແນວທາງການຕ່າງປະເທດ ຂອງພັກ-ລັດ ທີ່ວາງອອກ, ເພີ່ມທະວີການຮ່ວມມືກັບສາກົນເປັນຕົ້ນ ບັນດາປະເທດເພື່ອນມິດຍຸດທະສາດ, ບັນດາປະເທດ ອາຊຽນ ແລະ ບັນດາປະເທດ ຂະຫຍາຍຕົວທາງດ້ານອຸດສະຫະກຳເພື່ອການຮ່ວມມື, ການແລກປ່ຽນສິນຄ້າ ແລະ ເພື່ອການພັດທະນາ ແລະ ປະກອບສ່ວນເຮັດໃຫ້ຖານະບົດບາດຂອງ ສປປ ລາວ ສູງເດັ່ນຂຶ້ນໃນເວທີສາກົນ.

